Document obtenu sur le site http://Agroecologie.cirad.fr

# ພືດອາຫານສັດຕະກຸນຖົ່ວ ແລະ ຕະກຸນຫຍ້າເມັດນ້ອຍ

## ແມ່ນພືດອາຫານສັດຊະນິດໃດທີ່ສາມາດປັບປຸງ ເປັນອາຫານໃຫ້ແກ່ສັດໃຫຍ່ກໍ່ຄືສັດນ້ອຍໄດ້?








ພືດອາຫານສັດຕະກຸນຖົ່ວ ແລະ ຕະກຸນຫຍ້າເມັດນ້ອຍລ້ວນແລ້ວແຕ່ເປັນອາຫານໃຫ້ແກ່ສັດ ແລະ ໂດຍສະເພາະແມ່ນສັດໃຫຍ່. ພືດອາຫານສັດຕະກຸນຫຍ້າເມັດນ້ອຍແມ່ນໃຫ້ຜົນຜະລິດມວນສານສູງກວ່າພືດອາຫານສັດຕະກຸນຖົ່ວ ແລະ ຍັງເປັນພື້ນຖານອາຫານໃຫ້ແກ່ສັດໃຫຍ່(ສັດຄ້ຽວເອື້ອງ)(ຄວາມຕ້ອງການຂອງສັດສຳຫຼັບກິນໃນແຕ່ລະມື້ໂດຍປະມານແມ່ນ 3 ກິໂລຂອງມວນສານແຫ້ງສຳຫຼັບສັດທີ່ມີນ້ຳໜັກ100 ກິໂລ). ຄຽງຄູ່ກັນນັ້ນພືດອາຫາສັດຕະກຸນຖົ່ວແມ່ນມີທາດໂປເຕອີນຫຼາຍກວ່າພືດອາຫານສັດຕະກຸນຫຍ້າ (ເຊິ່ງມີຢູ່ໃນລະ ຫວ່າງ 15 ຫາ 20% ກົງກັນຂ້າມພືດອາຫາສັດຕະກຸນຫຍ້າມີພຽງແຕ່ 5 ຫາ 15%) ແລະ ຍັງເຮັດໃຫ້ການຈະເລີນເຕີບໂຕຂອງສັດໄດ້ດີ.



*ຫຍ້າ ຣູຊີ* ( **Ruzi** )

- ພືດອາຫານສັດດັ່ງກ່າວແມ່ນມີຄຸນນະພາບສູງ
- ປູກງ່າຍ(ປູກດ້ວຍແກ່ນ ຫຼື ດ້ວຍເຫງົ້າກໍ່ໄດ້)
- ໃຫ້ຜົນຜະລິດແກ່ນຫຼາຍ

**ແຕ່ວ່າ...**

- ເຊື້ອມໂຊມໄວຢູ່ໃນດິນທີ່ມີຄວາມອຸດົມສົມບູນໜ້ອຍ
- ທົນທານຕໍ່ກັບຄວາມແຫ້ງແລ້ງໄດ້ໜ້ອຍ



*ຫຍ້າ ບຣີຊອງຕາ ມາຣອງດູ* (**Marandu**)

- ລຳຕົ້ນຂອງມັນສາມາດສູງຮອດ 2m ( ເໝາະສົມສຳຫຼັບຕັດ-ກ່ຽວ)
- ສາມາດເກີດຂື້ນກັບດິນສົ້ມ ແລະ ດິນທີ່ມີຄວາມອຸດົມສົມບູນຕ່ຳໄດ້ດີ
- ຊຽວຈົນຮອດຊ່ວງໄລຍະກາງຂອງລະດູແລ້ງ

**ແຕ່ວ່າ...**

- ມີຜົນກະທົບຕໍ່ກັບແບ້ ແລະ ງົວນ້ອຍ



*ຫຍ້າ ບີກູເບັນ* (**Basilisk**)

- ສາມາດເກີດຂື້ນໄດ້ກັບດິນຫຼາຍປະເພດ
- ຊຽວຈົນຮອດຊ່ວງໄລຍະກາງຂອງລະດູແລ້ງ
- ໃຫ້ຜົນຜະລິດເມັດພັນໄດ້ດີ ຢູ່ ແຂວງ ຊຽງຂວາງ

**ແຕ່ວ່າ...**

- ມີຜົນກະທົບຕໍ່ກັບແບ້ ແລະ ງົວນ້ອຍ



*ຫຍ້າ ມູນລາໂຕ* (**Mulato**)

- ແມ່ນການປະສົມພັນລະຫວ່າງຫຍ້າ ຣູຊີ ແລະ ບຣີຊອງຕາ
- ເປັນຫຍ້າອາຫານສັດທີ່ມີຄຸນນະພາບດີ (ຄືກັບຫຍ້າ ຣູຊີ)
- ຊຽວຈົນຮອດຊ່ວງໄລຍະກາງຂອງລະດູແລ້ງ(ຄືກັບຫຍ້າ ບຣີຊອງຕາ)

**ແຕ່ວ່າ...**

- ໃຫ້ຜົນຜະລິດເມັດເຕັມໜ້ອຍ (10%)



*ຫຍ້າ ຣູມີດີໂກລາ* (**Tully**)

- ລຳຕົ້ນຂອງມັນເປັນເຄືອຍາວເລືອຕາມດິນເຊິ່ງສ້າງໃຫ້ມີຜົນດີໃນການຕ້ານການເຊາະລ້າງຂອງຊັ້ນໜ້າດິນ
- ດີສາມາດເກີດຂື້ນໄດ້ຢູ່ໃນດິນທີ່ຂາດຄຸນນະພາບ
- ທົນຕໍ່ກັບພື້ນທີ່ມີນ້ຳຂັງ

**ແຕ່ວ່າ...**

- ຄຸນນະພາບເປັນອາຫານໃຫ້ແກ່ສັດແມ່ນຢູ່ໃນລະດັບກາງ
- ໃຫ້ຜົນຜະລິດເມັດພັນໜ້ອຍ



*ຫຍ້າ ແກມບາ* (**Gamba**)

- ລຳຕົ້ນຕັ້ງຂື້ນສູງ (ເໝາະສົມໃນການຕັດ-ກ່ຽວ)
- ສາມາດເກີດຂື້ນໄດ້ຢູ່ໃນດິນສົ້ມ ແລະ ດິນຂາດຝຸ່ນ

**ແຕ່ວ່າ...**

- ຈະກາຍເປັນຫຍ້າແຂງໄດ້,ຖ້າພວກເຮົາບໍ່ຕັດເປັນປະຈຳ
- ຂະຫຍາຍຕົວບໍ່ໄດ້ດີສຳລັບດິນທີ່ມີການເຊາະລ້າງ



*ຫຍ້າ ປານິກອມ ມາກຊີມອມ* (T58)

- ເປັນພືດອາຫານສັດທີ່ດີໃຫ້ແກ່ສັດໃຫຍ່ ແລະ ປາ
- ລຳຕົ້ນຕັ້ງຂື້ນສູງ(ເໝາະສົມໃນການຕັດ-ກ່ຽວ)

**ແຕ່ວ່າ...**

- ຈະກາຍເປັນຫຍ້າແຂງໄດ້,ຖ້າພວກເຮົາບໍ່ຕັດເປັນປະຈຳ
- ຈຳເປັນຕ້ອງໄດ້ປູກໃນດິນທີ່ມີຄວາມອຸດົມສົມບູນ ແລະ ໃສ່ຝຸ່ນເປັນປະຈຳ



*ຫຍ້າ ປັດສະປາລອມ ໂນຕາຕອມ* *(**Terenos**)*

- ລຳຕົ້ນຕັ້ງຂື້ນສູງ(ເໝາະສົມໃນການຕັດ-ກ່ຽວ)
- ເໝາະສົມສຳຫຼັບເປັນອາຫານໃຫ້ແກ່ສັດໃຫຍ່ ແລະ ປາ

**ແຕ່ວ່າ...**

- ທົນທານຕໍ່ກັບຄວາມແຫ້ງແລ້ງບໍ່ໄດ້ດີ
- ໃບຂອງມັນແຂງຫຼາຍ



*ຖົ່ວ ສະຕາຍໂລ ຊອງແຕ່ສ* (**CIAT 184**)

- ລຳຕົ້ນຕັ້ງຂື້ນ,ເປັນພູມ,ເໝາະສົມສຳຫຼັບການຕັດ-ກ່ຽວ
- ສາມາດເກີດຂື້ນກັບດິນສົ້ມ ແລະ ມີຝຸ່ນໜ້ອຍໄດ້ດີ
- ດີສຳຫຼັບເປັນອາຫານໃຫ້ແກ່ສັດໃຫຍ່ ແລະ ສັດນ້ອຍ.

**ແຕ່ວ່າ...**

- ຈະສູນຫາຍໄປໄວ,ຖ້າຫາກຕັດຕ່ຳຫຼາຍ (<20cm) ແລະ ຕັດເລື້ອຍໆ



***ຫຍ້າ ອີລູຍຊີນ Eleusine coracana***

- ເປັນພືດອາຫານສັດທີ່ມີຄຸນນະພາບດີຫຼາຍສຳຫຼັບການລ້ຽງສັດທຸກປະ ເພດ
- ສາມ່າດປັບໂຕເຂົາໃນດິນທີ່ສມ ແລະ ດິນທີ່ມີຄວາມອດົມສົມບູນປານກາງພໍສົມຄວນ
- ເປັນພືດທີ່ດີຫຼາຍໃນປີຜ່ານມາສຳຫຼັບປູກເຂົາໃສ່

**ແຕວາ...**

- ເປັນພືດລຳຕົ້ນລະດຽວ
- ບໍ່ຄວນຕັດກຽວຫຼັງຈ້າກສິ້ນສຸດການແຕກກໍແລ້ວ



*ເຂົາອາວ່ວນ Avoine blanche*

- ເປັນພືດອາຫານສັດທີ່ມີຄຸນນະພາບດີຫຼາຍສຳຫຼັບສັດຄ້ຽວເອື້ອງ ແລະ ບໍ່ຄ້ຽວເອື້ອງ.
- ເປັນພືດລະດູໜາວ (ມີຄວາມຕ້ອງການອາກາດໜາວເພື່ອການຈະ ເລີນເຕີບ ໂ ຕ)
- ເປັນພືດໄຮ (ຫຼັງຖົ່ວເຫຼືອງ) ປູກໃສ່ໄຮ່ນາໄດເຊັ່ນກັນ(ຫຼັງເຂົ້າ)
- ເປັນການແກ້ໄຂທີ່ດີສຳຫຼັບໃຫ້ສັດກິນໃນລະດູແລງ

**ແຕ່ວ່າ...**

- ເປັນພືດລຳຕົ້ນລະດຽວ
- ບໍ່ຄວນຕັດກຽວຫຼັງຈ້າກສິ້ນສຸດການແຕກກໍແລ້ວ



***ຖົ່ວແຮ*** (ມາຈາກປະເທດ ເບຣຊິນ)

- ເປັນພືດອາຫານສັດທີ່ດີມີທາດໂປເຕອີນຫຼາຍ
- ເປັນພືດຕົ້ນຕ່ຳສະດວກໃນການຕັດ-ກ່ຽວ
- ເໝາະສົມສຳຫຼັບປັບປຸງປ່າເລົ່າ(ຕາມຫຼັກເກນລະບົບຮາກຂະຫຍາຍຕົວ ແລະ ນຳເອົາທາດອາສົດເຂົ້າສູ່ດິນ)

**ແຕ່ວ່າ...**

- ເປັນພືດລະດູດຽວ